ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ພະນັກງານ ທຫລ ຮັບທຶນຄົ້ນຄວ້າ ປທ ຢູ່ອັງກິດ




ຜູ້ສື່ຂ່າວພວກເຮົາ ໄດ້ສຳພາດທ່ານ ນາງ ມະລິຈັນ ຈຽມສີສຸລາດ ພະນັກງານກົມຮ່ວມມືສາກົນ ທະນາຄານແຫ່ງ ສປປ ລາວ (ທຫລ) ທີ່ຈະສຶກສາຕໍ່ໃນສາຂາເຕັກໂນໂລຊີທາງການເງິນ ລົງເລິກຂະແໜງການເງິນ (Financial Technology) ທີ່ມະຫາວິທະຍາໄລ ເອສເຊັກຊ໌ ແລະ ທ່ານ ນາງ ສົມໝາຍ ເຮືອນແກ້ວມະນີ ພະນັກງານຫ້ອງການ ທຫລ ທີ່ຈະສຶກສາຕໍ່ ສາຂາການເງິນການທະນາຄານ ລົງເລິກນະໂຍບາຍເງິນຕາຂອງທະນາຄານກາງ (Money, Banking and Central Banking) ທີ່ມະຫາວິທະຍາໄລ ບັກຄິງແຮັມ ຊຶ່ງທັງ 2 ຈະໄດ້ເດີນທາງໄປປະເທດອັງກິດ ໃນຕົ້ນເດືອນຕຸລາ 2021 ນີ້.

ທ່ານ ນາງ ມະລິຈັນ ຈຽມສີສຸລາດ ແລະ ທ່ານນາງ ສົມໝາຍ ເຮືອນແກ້ວມະນີ ໄດ້ກ່າວວ່າ: ທຶນ Chevening Scholarship ເພື່ອໄປສຶກສາທີ່ປະເທດອັງກິດ ແມ່ນທຶນການສຶກສາຄົ້ນຄວ້າຕໍ່ໃນລະດັບປະລິນຍາໂທ ເປັນເວລາ 1 ປີ ແລະ ເປັນທຶນເປີດກວ້າງ ທີ່ມີຈຳນວນຜູ້ເຂົ້າຮ່ວມສອບເສັງໃນແຕ່ລະປີຫຼາຍກວ່າ 60.000 ຄົນຈາກ 160 ກວ່າປະເທດທົ່ວໂລກ; ສະເລ່ຍແຕ່ລະປີມີຜູ້ຮັບທຶນນີ້ 1500 ທຶນ. ສຳລັບ ສປປ ລາວ ໃນສົກຮຽນ 2021-2022 ໄດ້ຮັບທຶນການສຶກສາດັ່ງກ່າວ ຈຳນວນ 9 ຄົນໃນນີ້ ແລະ ທຫລ ສາມາດຍາດແຍ່ງໄດ້ 2 ທຶນ.

ຜູ້ທີ່ຮັບທຶນທັງ 2 ທ່ານ ຍັງສະແດງຄວາມຮູ້ບຸນຄຸນ, ຄໍາຂອບໃຈອັນສູງມາຍັງອົງການຈັດຕັ້ງ ແລະ ການນໍາຂັ້ນຂອງ ທຫລ ທີ່ໃຫ້ໂອກາດເຂົ້າປະກອບສ່ວນໃນຂະແໜງທະນາຄານສາມາດເກັບກ່ຽວຄວາມຮູ້, ປະສົບການດ້ານຕ່າງໆທີ່ຕິດພັນສາມາດຍາດແຍ່ງທຶນການສຶກສາດັ່ງກ່າວໄດ້ ແລະ ຈະພ້ອມກັນຕັ້ງໜ້າຄົ້ນຄວ້າ, ສຶກສາຫາຄວາມຮູ້ໃໝ່ແຕ່ລະສາຂາຮຽນຂອງຕົນ ໂດຍສະເພາະສຶກສາຄົ້ນຄວ້າ ແລະ ພັດທະນາເຄື່ອງມືນະໂຍບາຍເງິນຕາ, ການສົ່ງເສີມການເຂົ້າເຖິງການບໍລິການທາງການເງິນ ແລະ ການຫັນເສດຖະກິດເປັນດິຈິຕອລ ປະກອບສ່ວນເຂົ້າໃນການຂັບເຄື່ອນເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຍືນຍົງ; ແລະ ທັງ 2 ທ່ານ ຍັງກ່າວສະແດງຄວາມຂອບໃຈຢ່າງລົ້ນເຫຼືອມາຍັງຜູ້ໃຫ້ທຶນ, ລັດຖະບານ ແລະ ສະຖານທູດອັງກິດ ປະຈໍາ ສປປ ລາວ ທີ່ໃຫ້ຄວາມສໍາຄັນໃນການພັດທະນາຂະແໜງການທະນາຄານ, ເຫັນເຖິງຄວາມສາມາດ-ຄວາມຕັ້ງໃຈຂອງພວກຕົນທີ່ຈະໄປຄົ້ນຄວ້າ ແລະ ນໍາເອົາຄວາມຮູ້-ຄວາມສາມາດມາໝູນໃຊ້ເຂົ້າໃນວຽກງານທະນາຄານໃຫ້ມີຄວາມທັນສະໄໝເປັນກ້າວໆປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**# ຂ່າວ: ຣັດສະໝີ ດວງສັດຈະ**